*ຮ່າງສະບັບວັນທີ: 13.08.18*

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຂອ

ນະຄອນຫຼວງວຽງຈັນ,ວັນທີ ກັນຍາ 2018

**"ຮ່າງ"**

# ຂໍ້ຕົກລົງ

## ວ່າດ້ວຍສິດທາງການຄ້າ ຂອງ ຜູ້ຄ້າຕ່າງປະເທດ

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ, ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011.
- ອີງຕາມການໃຫ້ສັດຕະຍາບັນການເຂົ້າເປັນສະມາຊິກອົງການການຄ້າໂລກຂອງ ສປປ ລາວ, ຄັ້ງວັນທີ 21 ທັນວາ 2012.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງ ຜູ້ຄ້າຕ່າງປະເທດ ເພື່ອເປີດກວ້າງການຄ້າ ໂດຍສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການນຳເຂົ້າ ແລະ ການສົ່ງອອກສິນຄ້າ, ແນໃສ່ຊຸກຍູ້ສົ່ງເສີມການຄ້າ ແລະ ການຜະລິດພາຍໃນ ໃຫ້ມີຄວາມເຂັ້ມແຂງ, ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ສອດຄ່ອງກັບການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ.

**ມາດຕາ 2 ສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ**

ສິດທາງການຄ້າຂອງຜູ້ຄ້າຕ່າງປະເທດແມ່ນການໃຫ້ສິດໃນການນຳເຂົ້າ ຫຼື ສົ່ງອອກ ສິນຄ້າຂອງຜູ້ຄ້າຕ່າງປະເທດ ທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ຄ້າຕ່າງປະເທດ** (Foreign Traders) ໝາຍເຖິງ ຜູ້ຄ້າທີ່ຂຶ້ນທະບຽນ ແລະ ເຄື່ອນໄຫວທຸລະກິດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງປະເທດຜູ້ຄ້າຕ່າງປະເທດ.
2. **ຜູ້ຄ້າພາຍໃນ** (Domestic Traders) ໝາຍເຖິງ ວິສາຫະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວທຸລະກິດ, ແລະ ມີສິດໃນການຈຳໜ່າຍສິນຄ້າ ຢູ່ ສປປ ລາວ.
3. **ໃບຢັ້ງຢືນສິດທາງການຄ້າ** ໝາຍເຖິງ ເອກະສານທາງການທີ່ອອກໃຫ້ໂດຍ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຜູ້ຄ້າຕ່າງປະເທດ ທີ່ໄດ້ຮັບໃບຢັ້ງຢືນສິດທາງການຄ້າ ຢູ່ ສປປ ລາວ.

## ໝວດທີ II
## ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງ ຜູ້ຄ້າຕ່າງປະເທດ

**ມາດຕາ 5 ເງື່ອນໄຂການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ**

ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງ ຜູ້ຄ້າຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງລຸ່ມນີ້:

1. ມີໃບຢັ້ງຢືນສິດທາງການຄ້າ;
2. ນຳເຂົ້າ ແລະ ສົ່ງອອກ ສິນຄ້າຜ່ານດ່ານພາສີສາກົນ;
3. ວາງເງິນຄ້ຳປະກັນ (Bond) ກັບ ທະນາຄານແຫ່ງ ສປປ ລາວ;
4. ມີສັນຍາຊື້-ຂາຍສິນຄ້າກັບຜູ້ຄ້າພາຍໃນ.

**ມາດຕາ 6 ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກສິນຄ້າ**

ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງ ຜູ້ຄ້າຕ່າງປະເທດ ຕ້ອງປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ. ສຳລັບສິນຄ້າທີ່ຕ້ອງໄດ້ຮັບອະນຸຍາດຈາກຂະແໜງ ການຄຸ້ມຄອງ ຕ້ອງປະຕິບັດຕາມລະບຽບການສະເພາະທີ່ໄດ້ກຳນົດໄວ້.

ຜູ້ຄ້າຕ່າງປະເທດນຳສິນຄ້າເຂົ້າມາພັກໄວ້ຢູ່ໃນອານາເຂດພາສີ, ແຈ້ງເສຍພາສີ, ອາກອນ ແລະ ພັນທະອື່ນໆ ຕາມລະບຽບການພາສີ ແລະ ຈຳໜ່າຍໃຫ້ຜູ້ຄ້າພາຍໃນ.

## ໝວດທີ III
## ການອອກໃບຢັ້ງຢືນສິດທາງການຄ້າ

**ມາດຕາ 7 ເງື່ອນໄຂຜູ້ສະເໜີຂໍໃບຢັ້ງຢືນສິດທາງການຄ້າ**

ການສະເໜີຂໍໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຂຶ້ນທະບຽນ ແລະ ເຄື່ອນໄຫວທຸລະກິດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງປະເທດຜູ້ຄ້າຕ່າງປະເທດ;
2. ບໍ່ເຄີຍມີປະຫວັດການກະທຳຜິດ ຫຼື ບໍ່ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງທີ່ຕິດພັນກັບການຄ້າ ແລະ ການເງິນ;
3. ເປັນຜູ້ຄ້າຕ່າງປະເທດ ຈາກ ສະມາຊິກຂອງອົງການການຄ້າໂລກ.

**ມາດຕາ 8 ເອກະສານປະກອບການຂໍໃບຢັ້ງຢືນສິດທາງການຄ້າ**

ການຂໍໃບຢັ້ງຢືນສິດທາງການຄ້າ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບສະເໜີ ຕາມແບບຟອມທີ່ ກຳນົດໄວ້ໃນເອກະສານຊ້ອນທ້າຍ 1;
2. ສຳເນົາໜັງສືຜ່ານແດນຂອງຜູ້ຄ້າຕ່າງປະເທດ;
3. ສຳເນົາໃບທະບຽນວິສາຫະກິດ
4. ເອກະສານຢັ້ງຢືນທີ່ຕັ້ງຂອງວິສາຫະກິດທີ່ອອກໃຫ້ໂດຍອົງການຈັດຕັ້ງລັດທີ່ກ່ຽວຂ້ອງຂອງປະເທດຜູ້ຄ້າຕ່າງປະເທດ;
5. ເອກະສານຢັ້ງຢືນປະຫວັດທີ່ບໍ່ເຄີຍມີການກະທຳຜິດໃດໜຶ່ງຕາມທີ່ລະບຸໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
6. ໃບມອບສິດ (ໃນກໍລະນີທີ່ບໍ່ແມ່ນຜູ້ຄ້າຕ່າງປະເທດມາຍື່ນເອກະສານເອງ).

ກໍລະນີຕໍ່ອາຍຸໃບຢັ້ງຢືນສິດທາງການຄ້າ, ຜູ້ສະເໜີ ຕ້ອງປະກອບເອກະສານເພີ່ມເຕີມ ຄື:

1. ໃບຢັ້ງຢືນສິດທາງການຄ້າສະບັບຕົ້ນ;
2. ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ຄ່າພັນທະອື່ນໆ ຈາກ ກົມພາສີ.

ເອກະສານທີ່ລະບຸໄວ້ໃນມາດຕານີ້ຕ້ອງໄດ້ປະກອບເປັນພາສາລາວ ແລະ ພາສາອັງກິດ ໂດຍຜ່ານການຢັ້ງຢືນຈາກ ສະຖານທູດ, ຫ້ອງການຜູ້ຕາງໜ້າ ສປປ ລາວ ຫຼື ສະຖານທູດ, ຫ້ອງການຜູ້ຕາງໜ້າ ຂອງປະເທດຜູ້ຄ້າຕ່າງປະເທດ ປະຈໍາຢູ່ ສປປ ລາວ.

**ມາດຕາ 9 ຂັ້ນຕອນການສະເໜີ ແລະ ພິຈາລະນາອອກໃບຢັ້ງຢືນສິດທາງການຄ້າ**

9.1. ຍື່ນເອກະສານຕາມທີ່ໄດ້ລະບຸໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເຖິງ ກົມການນໍາເຂົ້າ ແລະ ສົ່ງອອກ.

9.2. ກົມການນໍາເຂົ້າ ແລະ ສົ່ງອອກ ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານຕາມທີ່ໄດ້ລະບຸໄວ້ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

9.3. ກໍລະນີຜູ້ຄ້າຕ່າງປະເທດສາມາດປະຕິບັດໄດ້ຕາມເງື່ອນໄຂທີ່ລະບຸໄວ້ໃນ ມາດຕາ 7 ຂອງ ຂໍ້ຕົກລົງສະບັບນີ້, ກົມການນໍາເຂົ້າ ແລະ ສົ່ງອອກ ຈະອອກໃບຢັ້ງຢືນສິດທາງການຄ້າໃຫ້ຜູ້ຄ້າຕ່າງປະເທດຕາມແບບຟອມທີ່ລະບຸໃນເອກະສານຊ້ອນທ້າຍ 3, ຊ້າສຸດບໍ່ໃຫ້ເກີນ 30 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

9.4. ໃນກໍລະນີທີ່ ຜູ້ຄ້າຕ່າງປະເທດ ບໍ່ໄດ້ເງື່ອນໄຂໃດໜຶ່ງ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ກົມການນໍາເຂົ້າ ແລະ ສົ່ງອອກ ຈະແຈ້ງໃຫ້ຜູ້ສະເໜີຮັບຊາບໂດຍຊີ້ແຈງເຫດຜົນເປັນລາຍລັກອັກສອນພາຍໃນ 30 ວັນ ລັດຖະການ ນັບແຕ່ມື້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 10 ການດັດແກ້ເນື້ອໃນ ແລະ ການອອກໃບຢັ້ງຢືນສິດຄືນໃໝ່**

ຖ້າຜູ້ໄດ້ຮັບໃບຢັ້ງຢືນສິດ ຫາກຕ້ອງການດັດແກ້ເນື້ອໃນ ຫຼື ອອກໃບຢັ້ງຢືນສິດຄືນໃໝ່ (ກໍລະນີໃບອະນຸຍາດຖືກທໍາລາຍ ຫຼື ເສຍຫາຍ) ຕ້ອງຍື່ນໃບສະເໜີຕາມແບບຟອມທີ່ລະບຸໃນເອກະສານຊ້ອນທ້າຍ 2 ເຖິງ ກົມການນໍາເຂົ້າ ແລະ ສົ່ງອອກ ເພື່ອພິຈາລະນາ, ແຕ່ອາຍຸການນໍາໃຊ້ຂອງໃບຢັ້ງຢືນສິດສະບັບໃໝ່ ແມ່ນຖືເອົາ ຕາມທີ່ກໍານົດໄວ້ໃນໃບຢັ້ງຢືນສິດສະບັບເກົ່າ.

ຂັ້ນຕອນຂອງການດັດແກ້ເນື້ອໃນ ແລະ ການອອກໃບຢັ້ງຢືນສິດຄືນໃໝ່ແມ່ນປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11 ອາຍຸ ແລະ ການຕໍ່ອາຍຸຂອງໃບຢັ້ງຢືນສິດທາງການຄ້າ**

ໃບຢັ້ງຢືນສິດທາງການຄ້າມີອາຍຸນໍາໃຊ້ ສອງ (2) ປີ ແລະ ສາມາດຕໍ່ໄດ້, ການຕໍ່ແຕ່ລະຄັ້ງແມ່ນມີອາຍຸ ສອງ (2) ປີເທົ່າກັນ.

ສໍາລັບເອກະສານປະກອບ ແລະ ຂັ້ນຕອນການຍື່ນສະເໜີຂໍຕໍ່ອາຍຸ ແມ່ນໃຫ້ປະຕິບັດຕາມທີ່ລະບຸໄວ້ໃນມາດຕາ 8 ແລະ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການລົບລ້າງໃບຢັ້ງຢືນສິດທາງການຄ້າ**

ໃບຢັ້ງຢືນສິດທາງການຄ້າ ຈະຖືກລົບລ້າງໃນກໍລະນີດັ່ງນີ້:

1. ໝົດອາຍຸການນໍາໃຊ້ ແລະ ຜູ້ຄ້າຕ່າງປະເທດບໍ່ໄດ້ສະເໜີຕໍ່ອາຍຸ;
2. ໝົດອາຍຸການນໍາໃຊ້ ແລະ ກົມການນາເຂົ້າ ແລະ ສົ່ງອອກ ບໍ່ອະນຸຍາດໃຫ້ສືບຕໍ່ ຍ້ອນສາເຫດໃດໜຶ່ງ ທີ່ກໍານົດໃນມາດຕາ 7, 15 ແລະ 16 ຂອງຂໍ້ຕົກລົງສະບັບນີ້;
3. ກົມການນໍາເຂົ້າ ແລະ ສົ່ງອອກ ສັ່ງໃຫ້ລົບລ້າງກ່ອນມື້ໝົດອາຍຸ ຍ້ອນຜູ້ຄ້າຕ່າງປະເທດ ລະເມີດຕໍ່ມາດຕາ 15 ແລະ 16 ຂອງຂໍ້ຕົກລົງສະບັບນີ້;
4. ຜູ້ຄ້າຕ່າງປະເທດສະເໜີລົບລ້າງກ່ອນມື້ໝົດອາຍຸ.

ກ່ອນລຶບລ້າງໃບຢັ້ງຢືນສິດທາງການຄ້າ, ຜູ້ໄດ້ຮັບສິດຕ້ອງຊໍາລະໜີ້ສິນທັງໝົດ ແລະ ປະຕິບັດພັນທະຕ່າງໆທີ່ຕົນຕ້ອງປະຕິບັດຕໍ່ພາກລັດ, ທຸລະກິດ ແລະ ປະຊາຊົນທົ່ວໄປ.

**ມາດຕາ 13 ຄ່າທໍານຽມ ແລະ ຄ່າບໍລິການໃບຢັ້ງຢືນສິດທາງການຄ້າ**

ຄ່າທໍານຽມ ແລະ ຄ່າບໍລິການ ທີ່ຕິດພັນກັບ ໃບຢັ້ງຢືນສິດທາງການຄ້າ ມີດັ່ງນີ້:

| ປະເພດ | ຄ່າທໍານຽມ | ຄ່າບໍລິການ |
|---|---|---|
| ອອກໃບຢັ້ງຢືນສິດທາງການຄ້າ | 100.000 ກີບ | 2.000.000 ກີບ |
| ດັດແກ້ເນື້ອໃນໃບຢັ້ງຢືນສິດທາງການຄ້າ | 100.000 ກີບ | 1.000.000 ກີບ |
| ອອກໃບຢັ້ງຢືນສິດທາງການຄ້າຄືນໃໝ່ | 100.000 ກີບ | 1.000.000 ກີບ |
| ຕໍ່ອາຍຸໃບຢັ້ງຢືນສິດທາງການຄ້າ | 100.000 ກີບ | 1.000.000 ກີບ |

ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການ ອອກ, ດັດແກ້, ອອກຄືນ ແລະ ຕໍ່ອາຍຸຂອງໃບຢັ້ງຢືນສິດທາງການຄ້າອາດມີການປ່ຽນແປງຕາມລັດຖະບັນຍັດປະທານປະເທດວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

## ໝວດທີ V
## ສິດ ແລະ ພັນທະຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນສິດທາງການຄ້າ

**ມາດຕາ 14 ຂອບເຂດສິດ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນສິດທາງການຄ້າ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນສິດທາງການຄ້າ ມີສິດດັ່ງນີ້:

1. ນໍາເຂົ້າສິນຄ້າ ເພື່ອຈໍາໜ່າຍໃຫ້ແກ່ຜູ້ຄ້າພາຍໃນ ແລະ ຊື້ສິນຄ້າຈາກຜູ້ຄ້າພາຍໃນເພື່ອສົ່ງອອກ;
2. ແຈ້ງເສຍພາສີ, ອາກອນ ແລະ ຄ່າພັນທະອື່ນໆ ດ້ວຍຕົນເອງ ຫຼື ນາໃຊ້ບໍລິການຂອງຜູ້ແຈ້ງພາສີ;
3. ສະເໜີຂໍໂຈະຊົ່ວຄາວ, ຕໍ່ອາຍຸ, ດັດແກ້ເນື້ອໃນ ຫຼື ລຶບລ້າງໃບຢັ້ງຢືນສິດທາງການຄ້າ;
4. ໄດ້ຮັບສິດອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 15 ພັນທະຂອງຜູ້ທີ່ໄດ້ຮັບສິດທາງການຄ້າ**

ຜູ້ທີ່ໄດ້ຮັບສິດທາງການຄ້າ ມີພັນທະດັ່ງນີ້:

1. ນໍາເຂົ້າ ສົ່ງອອກ ສິນຄ້າ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບໃບຢັ້ງຢືນສິດ, ກົດໝາຍ ແລະ ລະບຽບຂອງ ສປປ ລາວ;
2. ເສຍພາສີ-ອາກອນ ແລະ ພັນທະອື່ນໃຫ້ແກ່ລັດຖະບານຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. ສະໜອງຂໍ້ມູນ ແລະ ເອກະສານທີ່ຖືກຕ້ອງກ່ຽວກັບການນໍາເຂົ້າ ແລະ ສົ່ງອອກສິນຄ້າ ປະຈໍາເດືອນ, ງວດ, ແລະ ປີ ໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ;
4. ແຈ້ງ ກົມການນໍາເຂົ້າ ແລະ ສົ່ງອອກ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ ກ່ອນລ່ວງໜ້າ 15 ວັນ ໃນກໍລະນີທີ່ມີການໂຈະ ຫຼື ຍົກເລີກກິດຈະການ.
5. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ V
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ໄດ້ຮັບສິດທາງການຄ້າ**

ຫ້າມຜູ້ທີ່ໄດ້ຮັບສິດທາງການຄ້າ ມີພຶດຕິກຳດັ່ງນີ້:

1. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ໂດຍບໍ່ຖືກຕ້ອງຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ລະເມີດຕໍ່ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 17 ຂໍ້ຫ້າມສຳລັບພະນັກງານລັດຖະກອນ**

ຫ້າມພະນັກງານລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງການອອກໃບຢັ້ງຢືນສິດທາງການຄ້າ;
2. ຂັດຂວາງການນຳເຂົ້າ ແລະ ການສົ່ງອອກສິນຄ້າຂອງຜູ້ທີ່ໄດ້ຮັບສິດ; ແລະ
3. ພຶດຕິກຳອື່ນທີ່ເປັນການລະເມີດຕໍ່ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ.

## ໝວດທີ VI
## ອົງການຄຸ້ມຄອງສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

**ມາດຕາ 18 ອົງການຄຸ້ມຄອງສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ**

ອົງການຄຸ້ມຄອງສິດທາງການຄ້າຂອງຜູ້ຄ້າຕ່າງປະເທດແມ່ນ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ**

1. ເຜີຍແຜ່ແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຢ່າງທົ່ວເຖິງ;
2. ພິຈາລະນາອອກ, ໂຈະ, ຖອນ, ລົບລ້າງ, ຕໍ່ອາຍຸ, ອອກຄືນໃໝ່ ແລະ ປັບປຸງເນື້ອໃນຂອງໃບຢັ້ງຢືນສິດທາງການຄ້າ;
3. ເຜີຍແຜ່ໃຫ້ມວນຊົນຮັບຊາບ ໂດຍຜ່ານສື່ຕ່າງໆ ຂອງ ສປປ ລາວ ພາຍໃນ ສິບ (10) ວັນລັດຖະການ ຫຼັງຈາກໄດ້ອອກອະນຸຍາດ, ໂຈະຊົ່ວຄາວ ຫຼື ລົບລ້າງໃບຢັ້ງຢືນສິດທາງການຄ້າ;
4. ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ທີ່ໄດ້ຮັບສິດ;
5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ໄດ້ຮັບສິດ ເພື່ອ ລາຍງານໃຫ້ຄະນະນຳກະຊວງ ຮັບຊາບ ປະຈຳງວດ ແລະ ປະຈຳປີ;
6. ປະຕິບັດໜ້າທີ່ອື່ນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ແລະ ລະບຽບການອື່ນ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ໄດ້ຮັບສິດນຳເຂົ້າ ແລະ ສົ່ງອອກສິນຄ້າ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີ ຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍ ອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ**

ຜູ້ໄດ້ຮັບສິດນຳເຂົ້າ ແລະ ສົ່ງອອກສິນຄ້າ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນມາດຕະການຕາມແຕ່ລະກໍລະນີຄວາມໜັກເບົາຂອງການກະທຳຜິດ ດັ່ງນີ້:

1. ນຳເຂົ້າສິນຄ້າໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ຄຸ້ມຄອງ (ຄັ້ງທີ 1 ຕັກເຕືອນພ້ອມປັບໃໝ 50 ຂອງມູນຄ່າສິນຄ້າ, ຄັ້ງທີ 2 ໂຈະການເຄື່ອນໄຫວຊົ່ວຄາວເປັນເວລາ 03 ເດືອນພ້ອມປັບໃໝ 100 ຂອງມູນຄ້າ, ຄັ້ງທີ 3 ຖອນໃບຢັ້ງຢືນສິດທາງການຄ້າ);
2. ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ເກືອດຫ້າມການນຳເຂົ້າ ແລະ ສົ່ງອອກ ຈະຖືກຍົກເລີກ ແລະ ລຶບລ້າງໃບຢັ້ງຢືນສິດທາງການຄ້າໂດຍທັນທີ, ພ້ອມທັງປັບໃໝສອງເທົ່າຂອງມູນຄ່າ. ຖ້າເປັນການກະທຳຜິດທາງແພ່ງ ຫຼື ທາງອາຍາ ແມ່ນຈະຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ລະບຸໄວ້.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງອື່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ (15) ວັນ.

**ລັດຖະມົນຕີ**
**ກະຊວງອຸດສາຫະກຳ ແລະ ການຄ້າ**

# ເອກະສານຊ້ອນທ້າຍ 1: ແບບຟອມໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າ

**TRADING RIGTHS CERTIFICATE APPLICATION**

**1. Application lodged for**/ໃບສະເໜີຂໍ

| | |
|---|---|
| ☐ new certificate/ອອກໃບຢັ້ງຢືນໃໝ່ | ☐ renew certificate/ຕໍ່ອາຍຸໃບຢັ້ງຢືນ |

**2. Applicant personal details (**Details given in this section must match with the passport, business registration certificate or other official documents)./ຂໍ້ມູນສ່ວນຕົວຂອງຜູ້ສະເໜີ (ໃນພາກສ່ວນນີ້ ສໍາລັບລາຍລະອຽດໃນການຕື່ມຂໍ້ມູນຕ້ອງຄືກັນກັບຂໍ້ມູນໃນໜັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານທາງການອື່ນໆ.)

| | | | |
|---|---|---|---|
| ຄໍານໍາໜ້ານາມ | ☐ Mr/ທ້າວ ☐ Mrs/ນາງ ☐ Ms/ນາງ ☐ Dr/ດຣ<br>☐ Other:/ອື່ນໆ .........................................................................<br>(Please specify)/(ກະລຸນາລະບຸ) | | |
| Family name/ນາມສະກຸນ | | | |
| Given name/ ຊື່ | | | |
| Gender/ເພດ | ☐ Male/ຊາຍ ☐ Female/ຍິງ<br>☐ Other:ອື່ນໆ .........................................................................<br>(*Indeterminate/intersex/unspecified*)/ (ບໍ່ຊັດເຈນ/ສອງເພດ /ບໍ່ລະບຸ) | | |
| Current nationality/ສັນຊາດ | | | |
| Passport number/ໜັງສືຜ່ານແດນເລກທີ | | Date of issue/ອອກໃຫ້ວັນທີ | ☐ ...../....../........... (dd/mm/yyyy)/(ວັນທີ/ເດືອນ/ປີ) |
| Issued by/ອອກໃຫ້ໂດຍ | | Valid until/ໝົດອາຍຸວັນທີ | ☐ ...../....../........... (dd/mm/yyyy))/(ວັນທີ/ເດືອນ/ປີ) |

Current applicant's home address and contact details (telephone, fascimile and e-mail)/ (ກະລຸນາລະບຸ ລາຍລະອຽດຂອງທີ່ຢູ່ປະຈຸບັນ ແລະ ຂໍ້ມູນຕິດຕໍ່ຂອງຜູ້ສະເໜີ (ເບີໂທລະສັບ, ແຟັກ ແລະ ອີເມລ)

**3. Business informations/ຂໍ້ມູນວິສາຫະກິດ**

| | |
|---|---|
| Business registration certificate number/ໃບທະບຽນວິສາຫະກິດເລກທີ | |
| Business activities/ກິດຈະການດໍາເນີນທຸລະກິດ | |
| Date of issue/ອອກໃຫ້ວັນທີ<br>☐ ...../....../...........<br>(dd/mm/yyyy)/))/(ວັນທີ/ເດືອນ/ປີ) | Expiration date/La<br>☐ ...../....../...........<br>(dd/mm/yyyy)/(ວັນທີ/ເດືອນ/ປີ)<br>☐ N/A (ບໍ່ມີ) |

Name and address of issuance authority (Address, telephone, fascimile)/ກະລຸນາລະບຸ ຊື່ ແລະ ທີ່ຢູ່ບ່ອນອອກອະນຸຍາດ (ທີ່ຢູ່,ເບີໂທລະສັບ, ແຟັກ)

**For official use only/ ສໍາລັບເຈົ້າໜ້າທີ່**

**Supporting documents: /ເອກະສານທີ່ຕ້ອງມີ**

☐ copy of passport/ສໍາເນົາໜັງສືຜ່ານແດນ
☐ Copy of Business registration certificate/ສໍາເນົາໃບທະບຽນວິສາຫະກິດ
☐ Office certificate/ ເອກະສານຢັ້ງຢືນອອກໂດຍພາກສ່ວນທີ່ກ່ຽວຂ້ອງ
☐ Criminal record/ໃບແຈ້ງໂທດ
☐ Power of attoney/ໃບມອບສິດ

**Additional documents/ ເອກະສານເພີ່ມເຕີມ** in case of renew:/ໃນກໍລະນີຕໍ່ອາຍຸໃບຢັ້ງຢືນ
☐ Original Trading rights certificate/ໃບຢັ້ງຢືນສິດທາງການຄ້າສະບັບຕົ້ນ
☐ Certificate of taxes and other fees payment from Customs Department/ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ຄ່າພັນທະອື່ນໆຈາກກົມພາສີ

**Application decision:/ ໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າ**
☐ Granted/ຜ່ານ
☐ Denied/ບໍ່ຜ່ານ

Reason(s) of denial:/ ເຫດຜົນທີ່ບໍ່ຜ່ານ
.........................................
.........................................
.........................................
.........................................
.........................................
.........................................
.........................................

<table>
<tr><td colspan="2"></td><td rowspan="4">........................................</td></tr>
<tr><td>Date of issue/ອອກໃຫ້ວັນທີ<br>☐ ...../....../........... (dd/mm/yyyy)/(ວັນທີ/ເດືອນ/ປີ)</td><td>Expiration date/ວັນທີໝົດອາຍຸ<br>☐ ...../....../........... (dd/mm/yyyy))/(ວັນທີ/ເດືອນ/ປີ)</td></tr>
<tr><td colspan="2">Surname, first name, titlement, telephone, fascimile and e-mail address of contact person in the issue authority/ ກະລຸນາລະບຸ ຊື່, ນາມສະກຸນ, ເບີໂທລະສັບ, ແຟັກ ແລະ ທີ່ຢູ່ອີເມລຂອງຜູ້ອອກອະນຸຍາດ</td></tr>
<tr><td>Existing trading rights certificate/ໃບຢັ້ງຢືນສິດທາງການຄ້າທີ່ມີຢູ່</td><td></td></tr>
<tr><td>I declared that to the best of my knowledge all particulars supplied by me are correct and complete. I am aware that any false statements will lead to my application being rejected or may render me liable to prosecution under the law and regulations of Lao PDR./ ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນແມ່ນຖືກຕ້ອງ ແລະ ຄົບຖ້ວນ. ຂ້າພະເຈົ້າຮັບຮູ້ວ່າຖ້າຫາກຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນບໍ່ຖືກຕ້ອງເຊິ່ງມີຜົນຕໍ່ການຂໍໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າບໍ່ຜ່ານ, ຂ້າພະເຈົ້າຍອມຮັບໂທດຕໍ່ຂໍ້ມູນບໍ່ຖືກຕ້ອງດັ່ງກ່າວຕາມກົດໝາຍ ແລະ ລະບຽບຂອງ ສປປ ລາວ ທີ່ກຳນົດໄວ້.</td><td colspan="2">Place and date/ທີ່ ແລະ ວັນທີ<br>..........................................................................................<br>Signature of applicant/ລາຍເຊັນຜູ້ສະເໜີ</td></tr>
</table>

# ເອກະສານຊ້ອນທ້າຍ 2: ແບບຟອມໃບສະເໜີຂໍດັດແກ້ ຫຼື ອອກໃບຢັ້ງຢືນສິດທາງການຄ້າ

## TRADING RIGTHS CERTIFICATE APPLICATION

| | | | |
|---|---|---|---|
| **1. Application lodged for/**ໃບສະເໜີຂໍ | | | |
| ☐ modification of certificate/ດັດແກ້ໃບຢັ້ງຢືນ | | ☐ re-issue certificate/ອອກໃບຢັ້ງຢືນຄືນໃໝ່ | |
| **2. Applicant personal details (**Details given in this section must match with the passport, business registration certificate or other official documents)./ຂໍ້ມູນສ່ວນຕົວຂອງຜູ້ສະເໜີ (ໃນພາກສ່ວນນີ້ ສຳລັບລາຍລະອຽດໃນການຕື່ມຂໍ້ມູນຕ້ອງຄືກັນກັບຂໍ້ມູນໃນໜັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານທາງການອື່ນໆ.) | | | |
| Name/ຊື່ | | | |
| Address and contact details (telephone, fascimile and e-mail)<br>ກະລຸນາລະບຸ ລາຍລະອຽດຂອງທີ່ຢູ່ ແລະ ຂໍ້ມູນຕິດຕໍ່ (ເບີໂທລະສັບ, ແຟັກ ແລະ ອີເມລ) | | | |
| Existing trading rights certificate/ ໃບຢັ້ງຢືນສິດທາງການຄ້າທີ່ມີຢູ່ | | | |
| Date of issue/ອອກໃຫ້ວັນທີ<br>☐ ...../....../...........<br>(dd/mm/yyyy)/(ວັນທີ/ເດືອນ/ປີ) | | Expiration date/ວັນທີໝົດອາຍຸ<br>☐ ...../....../...........<br>(dd/mm/yyyy)/ວັນທີ/ເດືອນ/ປີ) | |
| **3. Reason for modification or re-issuance (Tick where applicable)/ເຫດຜົນໃນການດັດແກ້ ຫຼື ອອກໃບຢັ້ງຢືນໃໝ່ (ກະລຸນາໝາຍໃສ່ຂໍ້ມູນລຸ່ມນີ້)** | | | |
| ☐ Lost/damage of Trading rights certificate/ໃບຢັ້ງຢືນສິດທາງການຄ້າເສຍ | | | |
| ☐ Change of business registration certificate/Passport/ປ່ຽນໃບວິສາຫະກິດ ຫຼື ໜັງສືຜ່ານແດນໃໝ່ | | | |
| ☐ Change of business owner/ປ່ຽນຊື່ເຈົ້າຂອງວິສາຫະກິດ | ຄຳແທນນາມ | ☐ Mr/ທ້າວ ☐ Mrs/ນາງ ☐ Ms/ນາງ ☐ Dr/ດຣ<br>☐ Other:/ອື່ນໆ ..................................................<br>(Please specify)/(ກະລຸນາລະບຸ) | |
| | Name/ຊື່ | | |
| | Family name /ນາມສະກຸນ | | |
| | Gender/ເພດ | ☐ Male/ຊາຍ ☐ Female/ຍິງ<br>☐ Other:/ອື່ນໆ ..................................................<br>(*Indeterminate/intersex/unspecified*)/(ບໍ່ຊັດເຈນ/ສອງເພດ /ບໍ່ລະບຸ) | |
| | Passport/ໜັງສືຜ່ານແດນເລກທີ | | |
| | Nationality/ ສັນຊາດ | | |
| | Issue by/ ອອກໃຫ້ໂດຍ | | |

**For official use only/ ສຳລັບເຈົ້າໜ້າທີ່**

**Supporting documents: /ເອກະສານທີ່ຕ້ອງມີ**

☐ copy of passport/ສຳເນົາໜັງສືຜ່ານແດນ

☐ Copy of Business registration certificate/ສຳເນົາໃບທະບຽນວິສາຫະກິດ

☐ Office certificate/ ເອກະສານຢັ້ງຢືນອອກໂດຍພາກສ່ວນທີ່ກ່ຽວຂ້ອງ

☐ Criminal record/ໃບແຈ້ງໂທດ

☐ Power of attoney/ໃບມອບສິດ

**Additional documents/ ເອກະສານເພີ່ມເຕີມ** in case of renew:/ໃນກໍລະນີຕໍ່ອາຍຸໃບຢັ້ງຢືນ

☐ Original Trading rights certificate/ໃບຢັ້ງຢືນສິດທາງການຄ້າສະບັບຕົ້ນ

☐ Certificate of taxes and other fees payment from Customs Department/ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ຄ່າພັນທະອື່ນໆຈາກກົມພາສີ

**Application decision:/ ໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າ**

☐ Granted/ຜ່ານ

☐ Denied/ບໍ່ຜ່ານ

Reason(s) of denial:/ ເຫດຜົນທີ່ບໍ່ຜ່ານ

.........................................
.........................................
.........................................
.........................................
.........................................
.........................................

<table>
<tr><td rowspan="2"></td><td>Issue date/<br>ອອກໃຫ້ວັນທີ</td><td></td><td rowspan="4">........................................<br>........................................</td></tr>
<tr><td>Valid until/<br>ໝົດອາຍຸວັນທີ</td><td></td></tr>
<tr><td>☐ Change of office address/ປ່ຽນທີ່ຢູ່ຫ້ອງການ</td><td colspan="2">New address and contact details (telephone, fascimile and e-mail) ກະລຸນາລະບຸ ລາຍລະອຽດທີ່ຢູ່ໃໝ່ ແລະ ຂໍ້ມູນຕິດຕໍ່ (ເບີໂທລະສັບ, ແຟັກ ແລະ ອີເມລ)</td></tr>
<tr><td colspan="2">I declared that to the best of my knowledge all particulars supplied by me are correct and complete. I am aware that any false statements will lead to my application being rejected or may render me liable to prosecution under the law and regulations of Lao PDR./ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນແມ່ນຖືກຕ້ອງ ແລະ ຄົບຖ້ວນ. ຂ້າພະເຈົ້າຮັບຮູ້ວ່າຖ້າຫາກຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນບໍ່ຖືກຕ້ອງເຊິ່ງມີຜົນຕໍ່ການຂໍໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າບໍ່ຜ່ານ, ຂ້າພະເຈົ້າຍອມຮັບໂທດຕໍ່ຂໍ້ມູນບໍ່ຖືກຕ້ອງດັ່ງກ່າວຕາມກົດໝາຍ ແລະ ລະບຽບຂອງ ສປປ ລາວ ທີ່ກຳນົດໄວ້.</td><td>Place and date/ທີ່ ແລະ ວັນທີ<br>......................................................................<br>Signature of applicant/ລາຍເຊັນຜູ້ສະເໜີ</td></tr>
</table>

# ເອກະສານຊ້ອນທ້າຍ 3: ໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**LAO PEOPLE'S DEMOCRATIC REPUBLIC**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**PEACE INDEPENDENCE DEMOCRACY UNITY PROSPERITY**

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce
ກົມການນຳເຂົ້າ ແລະ ສົ່ງອອກ
Department of Import and Export

Ref.no:…………/ ກຂອ.
DIMEX.

ນະຄອນຫຼວງວຽງຈັນ, ວັນທີ
Vientiane, date …/…/……

## ໃບຢັ້ງຢືນສິດທາງການຄ້າ/Trading Rights Certificate

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກາ ແລະ ການຄ້າ ອອກ ໃບຢັ້ງຢືນສິດທາງການຄ້າ ໃຫ້:
Department of Import and Export, Ministry of Industry and Commerce grants this certificate to:

| | | |
|---|---|---|
| ຊື່ເຈົ້າຂອງວິສາຫະກິດ/Business owner | | |
| ສັນຊາດ/Nationality | | |
| ໜັງສືຜ່ານແດນ/Passport | | |
| ຊື່ວິສາຫະກິດ/Name: | | |
| ໃບທະບຽນວິສາຫະກິດ<br>Business registration certificate | | |
| ທີ່ຕັ້ງສຳນັກງານ/office address | ຖະໜົນ/Street | |
| | ບ້ານ/Village | |
| | ເມືອງ/City | |
| | ປະເທດ/Country | |
| ໂທ/Telephone | | |
| ແຟັກ/Fax | | |
| ອີເມລ/E-mail | | |
| ອາຍຸນຳໃຊ້/validation | …../……./………. - ……../……./………… | |

**ຫົວໜ້າກົມ/Director General,**